ກະຊວງເຕັກໂນໂລຊີ ແລະ ການສື່ສານ
ສູນບໍລິຫານລັດດິຈິຕອນ

# ຄູ່ມືການຕິດຕັ້ງ ແລະ ນຳໃຊ້ລະບົບເວັບໄຊພາກລັດ

## G-web Platform

G-web
Platform

# ສາລະບານ

ໜ້າ

**ບົດທີ 1: ການຕິດຕັ້ງລະບົບເວັບໄຊພາກລັດລົງໃນຄອມພິວເຕີ**......................... 1

**1.** ການດາວໂຫລດ ແລະ ການຕິດຕັ້ງລະບົບເວັບເຊີເວີຈໍາລອງ (Xampp Server) ......................... 1

**2.** ການຕັ້ງຄ່າລະຫັດ (Password) ຂອງ phpMyAdmin ໃນເຊີເວີຈໍາລອງ (Xampp Server) ......................... 2

**ບົດທີ 2: ການຕິດຕັ້ງເວັບໄຊພາກລັດ (G-web)**......................... 6

**1. ການສ້າງຖານຂໍ້ມູນ ແລະ ການ Import ຖານຂໍ້ມູນ** ......................... 6

1.1 ການສ້າງຖານຂໍ້ມູນ ......................... 6

1.2 ການ Import ຖານຂໍ້ມູນ ......................... 7

**2. ການຕິດຕັ້ງລະບົບເວັບໄຊ (G-web) ແລະ ການຕິດຕັ້ງລະບົບ Ion Cube ໃນການອ່ານຟາຍ encryption ໃນເຊີເວີຈໍາລອງ (Xampp Server)**......................... 7

2.1 ການຕິດຕັ້ງລະບົບເວັບໄຊພາກລັດ (G-web) ......................... 7

2.2 ການຕິດຕັ້ງລະບົບ Ion Cube ໃນການອ່ານຟາຍ encryption......................... 8

**3. ຕັ້ງຄ່າ (Config) ການເຊື່ອມຕໍ່ຖານຂໍ້ມູນ ແລະ ເວັບໄຊ** ......................... 11

**ບົດທີ 3: ການຕັ້ງຄ່າ ແລະ ປັບແຕ່ງໜ້າເວັບໄຊ** ......................... 12

**1. ການເຂົ້າລະບົບໜ້າ Admin** ......................... 12

2. ການຕັ້ງຄ່າ ບໍລິຫານຜູ້ໃຊ້ ......................... 14

1.3 ການປິດການໃຊ້ງານຊື່ຜູ້ໃຊ້ Deactivate ......................... 15

1.4 ການແກ້ໄຂ ຊື່ຜູ້ໃຊ້ ......................... 16

1.5 ການລຶບຊື່ຜູ້ໃຊ້......................... 17

**ບົດທີ 4: ການບໍລິຫານຈັດການໜ້າເວັບໄຊ** ......................... 17

**1. ການບໍລິຫານຈັດການແບນເນີ (Banner)** ......................... 18

**2.** ການບໍລິຫານເມນູ......................... 19

2.1 ການເພີ່ມເມນູໃໝ່ ......................... 19

2.2 ການເພີ່ມເມນູຍ່ອຍ (Sub Menu)......................... 20

**ບົດທີ 5: ການບໍລິຫານຈັດການເນື້ອໃນໜ້າຫຼັກ (Home Page Management)**......................... 21

1. ການສ້າງຫົວຂໍ້ໝວດໝູ່ບົດຄວາມ (Category) ..... 21
2. ການເພີ່ມໜ້າຫຼັກ ..... 22
2.2 ບໍລິຫານ ໜ້າຫຼັກເບື້ອງຂວາ ..... 23
**ບົດທີ 6: ການບໍລິຫານຈັດການເນື້ອຫາ** ..... 25
**1.** ການບໍລິຫານປະເພດເນື້ອຫາ ..... 25
1.1 ການສ້າງປະເພດເນື້ອຫາ ..... 25
**2.** ການເພີ່ມບົດຄວາມ ຫຼື ຂ່າວ ..... 26
1.1 ການສ້າງບົດຄວາມທີ່ຂຶ້ນກັບໝວດໝູ່ ຫຼື ຫົວຂໍ້ ..... 26
2.2 ການສ້າງບົດຄວາມທີ່ບໍ່ຂຶ້ນກັບໝວດໝູ່ຂ່າວ (Static content) ..... 28
2.3 ການເພີ່ມຮູບພາບໃນບົດຄວາມ ..... 28
2.4 ການໃສ່ລິ້ງ Link ໃຫ້ຕົວໜັງສື ແລະ ຮູບພາບໃນບົດຄວາມ ..... 29
2.5 ການໃສ່ລິ້ງເມນູ ..... 30
2.6 ການນຳເຂົ້າວິດີໂອໃສ່ໜ້າເວັບ. ..... 33
2.7 ການໃສ່ແຜນທີ່ (Google Map) ..... 33
**ບົດທີ 7: ການບໍລິຫານຈັດການບັນຫາຄຳຕິຊົມ** ..... 34
1. ປະເພດບັນຫາ ..... 34
1.1 ການສ້າງປະເພດບັນຫາ ..... 34
1.2 ການເພີ່ມເມນູ ແຈ້ງບັນຫາ ..... 35
1.3 ການອ່ານປະເພດບັນຫາ ..... 36
**ບົດທີ 8: ການຈັດການລະບົບລົງທະບຽນກອງປະຊຸມ** ..... 36
1. ການສ້າງລະບົບລົງທະບຽນກອງປະຊຸມ ..... 36
2. ການເຊີນພາກສ່ວນຕ່າງໆລົງທະບຽນກອງປະຊຸມ ..... 37
3. ການລົງທະບຽນກອງປະຊຸມອອນລາຍ ..... 39

# ບົດທີ 1: ການຕິດຕັ້ງລະບົບເວັບໄຊພາກລັດລົງໃນຄອມພິວເຕີ

1. ການດາວໂຫລດ ແລະ ການຕິດຕັ້ງລະບົບເວັບເຊີເວີຈຳລອງ (Xampp Server)

1.1 ດາວໂຫຼດໂປຣແກຣມ Xampp Server ຕາມລິ້ງ:

https://www.apachefriends.org/download.html




1.2 ເລີ່ມການຕິດຕັ້ງໂປຣແກຣມ Xampp Server

- ຫຼັງຈາກດາວໂຫລດໂປຣແກຣມສຳເລັດແລ້ວ, ໂປຣແກຣມຈະຢູ່ Download, ກົດເປີດເພື່ອຕິດຕັ້ງ
    1. ກົດປຸ່ມ Next
    2. ກົດປຸ່ມ Next
    3. ກົດປຸ່ມ Finish



## 2. ການຕັ້ງຄ່າລະຫັດ (Password) ຂອງ phpMyAdmin ໃນເຊີເວີຈຳລອງ (Xampp Server)

ຂັ້ນຕອນທີ 1:

- ເປີດ Web Browser ແລະ ພິມ localhost.
- ກົດ phpMyAdmin.




- ກົດທີ່ User accounts.




- ຊອກຫາ User name: root ແລະ Host name: localhost.
- ສັງເກດຊ່ອງ Password ຈະເປັນ No.
- ກົດທີ່ Edit Privileges ເພື່ອແກ້ໄຂ.



- ກົດ Change password.




- ກຳນົດ Password ທີ່ຕ້ອງການໃສ່.
- ກົດ Go.




- ຈະເຫັນຂໍ້ຄວາມເດັ້ງຂຶ້ນວ່າ The password for User name root has been set successfully.




- ກັບໄປທີ່ localhost ອີກເທື່ອໜຶ່ງ.
- ກົດ phpMyAdmin.




- ຈະເຫັນຂໍ້ຄວາມ error ຂຶ້ນມາ.




ຂັ້ນຕອນທີ 2:

- ເຂົ້າໄປໂຟລ໌ເດີ XAMPP ຢູ່ C:.
- ກົດເຂົ້າ phpMyAdmin
- ຊອກຫາຟາຍ config.inc.php




- ຄິກຂວາຟາຍ config.inc.php.
- ກົດ Openwith Notepad ຫຼື WordPad




ຊອກຫາຄຳສັ່ງດັ່ງນີ້:

- $cfg['Servers'][$i]['auth_type'] = 'config';
- $cfg['Servers'][$i]['password'] = '';




- ປ່ຽນຄຳວ່າ 'config' ໃຫ້ເປັນ 'cookie'
- ໃນແຖວຄຳສັ່ງ $cfg['Servers'][$i]['password'] = ''; ໃຫ້ໃສ່ລະຫັດ (Password) ທີ່ກຳນົດໃນ phpMyAdmin ຂອງຂັ້ນຕອນທີ 1 ໃສ່ບ່ອນວ່າງ.
- ກົດ Save the file.




- ກັບຄືນ ແລະ Login ໜ້າ phpMyAdmin ອີກເທື່ອໜຶ່ງ.

.




# ບົດທີ 2: ການຕິດຕັ້ງເວັບໄຊພາກລັດ (G-web)

## 1. ການສ້າງຖານຂໍ້ມູນ ແລະ ການ Import ຖານຂໍ້ມູນ

### 1.1 ການສ້າງຖານຂໍ້ມູນ

1) ກົດ New
2) ພິມຊື່ Database ທີ່ຕ້ອງການສ້າງໃສ່ຊ່ອງ Database name
3) ກົດ Create ເພື່ອສ້າງ



1.2 ການ Import ຖານຂໍ້ມູນ

ດາວໂຫລດ Database ສໍາລັບການຝຶກອົບຮົມ ຕາມລິ້ງ:

https://g-drive.gov.la/index.php/s/6Ct6x8WKqPXQNc7

1) ເລືອກຖານຂໍ້ມູນທີ່ຕ້ອງການ Import ຖານຂໍ້ມູນເຂົ້າ
2) ກົດ choose File ເພື່ອເລືອກຟາຍຖານຂໍ້ມູນ
3) ເລືອກຟາຍທີ່ຕ້ອງການ ແລະ ກົດ Open
4) ກົດ Go







## 2. ການຕິດຕັ້ງລະບົບເວັບໄຊ (G-web) ແລະ ການຕິດຕັ້ງລະບົບ Ion Cube ໃນການອ່ານຟາຍ encryption ໃນເຊີເວີຈໍາລອງ (Xampp Server)

2.1 ການຕິດຕັ້ງລະບົບເວັບໄຊພາກລັດ (G-web)

ດາວໂຫຼດເວັບໄຊ Platform ທີ່: https://g-drive.gov.la/index.php/s/3c9nzbqdBjRnAZR

- ແຕກຟາຍທີ່ດາວໂຫລດ ແລະ ນຳໄປໄວ້ທີ່ C:\xampp\htdocs




2.2 ການຕິດຕັ້ງລະບົບ Ion Cube ໃນການອ່ານຟາຍ encryption

- ດາວໂຫຼດ Loaders for ionCube https://g-drive.gov.la/index.php/s/f82eogjirNrPwea
- ແຕກຟາຍ ແລ້ວ ເປີດໂຟລ໌ເດີ loader-wizard ແລະ copy ໂຟລ໌ເດີ ioncube
- ວາງໃສ່ໂຟລ໌ເດີເວັບໄຊ c:\xampp\htdocs\dgc (ໂຟລ໌ເດີ dgc ແມ່ນຊື່ໂຟລ໌ເດີເວັບໄຊ)



➢ ເປີດໂຟລ໌ເດີ loader-wizard ແລະ copy ໂຟລ໌ເດີ ioncube ແລ້ວໄປວາງໃສ່ໂຟລ໌ເດີເວັບໄຊ c:\xampp\htdocs\dgc (ໂຟລ໌ເດີ dgc ແມ່ນຊື່ໂຟລ໌ເດີເວັບໄຊ)




➢ ເຂົ້າໄປ config ໃນ web browser ແລະ ໃສ່ທີ່ຢູ່ຂອງເວັບໄຊ localhost/dgc/ioncube

- ກົດ loader-wizard.php




ຈະມີໜ້າຕ່າງຂຶ້ນມາ ໃຫ້ດາວໂຫລດ ionCube Loader Wizard

- ກົດດາວໂຫລດທີ່ Zip



- ແຕກໄຟລ໌ ioncube_loaders_win_vc15_x86-64.rar




- ເປີດໂຟລເດີ ioncube_loaders_win_vc15_x86-64/ioncube ແລະ Copy ໄຟລ໌:

ioncube_loader_win_7.2.dll

ioncube_loader_win_7.3.dll

ioncube_loader_win_7.4.dll




ແລ້ວໄປວາງໄວ້ທີ່ໂຟລ໌ເດີ c:\xampp\php\ext



- ເຂົ້າໄປໂຟລ໌ເດີ c:\xampp\php ແລະ ແກ້ໄຂໄຟລ໌ php.ini




- ເພີ່ມຄຳສັ່ງ zend_extension = "C:\xampp\php\ext\ioncube_loader_win_7.4.dll" ຢູ່ແຖວທຳອິດ ຂອງ [PHP]




- ກົດ restart Apache ໃນ xampp

## 3. ຕັ້ງຄ່າ (Config) ການເຊື່ອມຕໍ່ຖານຂໍ້ມູນ ແລະ ເວັບໄຊ

➢ ເຂົ້າໄປທີ່ C:\xampp\htdocs\dgc\gweb\gweb\common\config ແລ້ວເປີດຟາຍ db.php

➢ ປ່ຽນຊື່ຖານຂໍ້ມູນໃຫ້ເປັນຊື່ຖານຂໍ້ມູນທີ່ເຮົາຕັ້ງ

➢ ປ່ຽນ username ໃຫ້ເປັນ root

➢ ປ່ຽນ password ໃຫ້ເປັນ root

➢ ເປີດ Web browser ແລ້ວພິມ https://localhost/dgc/gweb/gweb/backend/web/ ເພື່ອເປີດໜ້າເວັບໄຊ







## ບົດທີ 3: ການຕັ້ງຄ່າ ແລະ ປັບແຕ່ງໜ້າເວັບໄຊ

### 1. ການເຂົ້າລະບົບໜ້າ Admin

- ເຂົ້າໜ້າເວັບໄຊ https://localhost/dgc/gweb/gweb/backend/web/
- ກົດທີ່ ໜ້າຫຼັກ ແລະ ແລ້ວປ່ຽນ URL ທາງທ້າຍສຸດຈາກ index ໃຫ້ເປັນ login



ຈະສະແດງໜ້າຕ່າງເຂົ້າສູ່ລະບົບດັ່ງຮູບ:




1) ໃສ່ຊື່
2) ລະຫັດຜ່ານເພື່ອເຂົ້າລະບົບ

   username= sonepasith@mpt.gov.la

   password=  Keakkickok@123

3) ໃສ່ລະຫັດ Captcha ຕາມຕົວອັກສອນທີ່ປະກົດອອກມາ
4) ກົດ ເຂົ້າສູ່ລະບົບ

ໜ້າຕ່າງຫຼັກຂອງໜ້າ Admin



2. ການຕັ້ງຄ່າ ບໍລິຫານຜູ້ໃຊ້

ການບໍລິຫານຜູ້ໃຊ້ ແມ່ນຈັດການລະດັບສິດການນຳໃຊ້, ການສ້າງ ຫຼື ລຶບ ບັນຊີຜູ້ໃຊ້ ໃນການບໍລິຫານ, ຈັດການເວັບໄຊຂອງເຮົາ ເຊິ່ງ G-web Platform ມີຂັ້ນ ຫຼື ລະດັບສິດການໃຊ້ງານທີ່ແຕກຕ່າງກັນດັ່ງນີ້:

- Super Admin: ເປັນຊື່ຜູ້ໃຊ້ທີ່ໃຊ້ສຳລັບການບໍລິຫານ, ຄວບຄຸມຂໍ້ມູນທັງໝົດຂອງລະບົບແວັບໄຊ ເຊັ່ນ: ການສ້າງຊື່ຜູ້ໃຊ້, ການຕົກແຕ່ງໜ້າຕາຂອງເວັບ, ການສ້າງເມນູເປັນຕົ້ນ.
- Admin: ເປັນຊື່ຜູ້ໃຊ້ສຳລັບການບໍລິຫານຂໍ້ມູນຕ່າງໆ, ການລົງຂໍ້ມູນຂ່າວສານເປັນຕົ້ນ.
- Admin Register: ເປັນຊື່ຜູ້ໃຊ້ສຳລັບຄວບຄຸມຂໍ້ມູນລົງທະບຽນ, ສ້າງກອງປະຊຸມ ແລະ ສ້າງ User Register ໃຫ້ສາມາດສ້າງກອງປະຊຸມຂອງຕົນເອງໄດ້.
- Register: ເປັນຊື່ຜູ້ໃຊ້ສຳລັບຄວບຄຸ້ມຂໍ້ມູນລົງທະບຽນ ສ້າງກອງປະຊຸມສະເພາະຂອງຕົນເອງໄດ້.
- Vision: ເປັນຊື່ຜູ້ໃຊ້ສຳລັບຜູ້ດູແລແຕ່ລະພະແນກ

2.1 ການສ້າງຊື່ຜູ້ໃຊ້ (Create User Account)

1) ກົດ ຕັ້ງຄ່າ
2) ກົດ ບໍລິຫານຜູ້ໃຊ້
3) ກົດ ເພີ່ມຜູ້ໃຊ້



4) ກຳນົດຊື່ຜູ້ໃຊ້ User (ຊື່ຜູ້ໃຊ້ຕ້ອງໃສ່ເປັນຮູບແບບຄືກັບ E-mail ເຊັ່ນ: sonepasith@mpt.gov.la)

5) ກຳນົດລະຫັດຜ່ານ (ການກຳນົດລະຫັດຜ່ານຕ້ອງປະກອບດ້ວຍຕົວອັກສອນພາສາອັງກິດຕົວພິມໃຫຍ່, ຕົວພິມນ້ອຍ, ຕົວເລກ ແລະ ຕົວອັກສອນພິເສດ. ຕົວຢ່າງ: Sone@1234)

6) ຊື່ ແລະ ນາມສະກຸນ ຂອງຜູ້ໃຊ້ງານ

7) ເລືອກປະເພດສິດຂອງຊື່ຜູ້ໃຊ້ ເຊັ່ນ: Super Admin, Admin…)

8) ຕິກໝາຍຖືກ (✓) ໃສ່ ໃຊ້ງານ

9) ກຳນົດວ່າ ຊື່ຜູ້ໃຊ້ສາມາດເຂົ້າເຖິງຫຍັງໄດ້ແດ່

10) ກົດ ເພີ່ມ




## 1.3 ການປິດການໃຊ້ງານຊື່ຜູ້ໃຊ້ Deactivate

ການປິດການໃຊ້ງານຊື່ຜູ້ໃຊ້ ເພື່ອບໍ່ໃຫ້ User ນັ້ນສາມາດເຂົ້າສູ່ລະບົບເວັບໄຊໄດ້ ເຊິ່ງມີວິທີການດັ່ງນີ້:

1) ເລືອກຊື່ຜູ້ໃຊ້ງານ ທີ່ຕ້ອງການປິດ ແລ້ວກົດປິດນຳໃຊ້ ດັ່ງຮູບ:




## 1.4 ການແກ້ໄຂ ຊື່ຜູ້ໃຊ້

ການແກ້ໄຂຊື່ຜູ້ໃຊ້ ເພື່ອປ່ຽນແປງຊື່ຜູ້ໃຊ້, ລະຫັດ, ສິດໃນການເຂົ້າເຖິງຕ່າງໆ ເຊິ່ງມີຂັ້ນຕອນດັ່ງນີ້:

1) ເລືອກຊື່ຜູ້ໃຊ້ງານ ທີ່ຕ້ອງການແກ້ໄຂ ແລ້ວກົດແກ້ໄຂ
2) ຫຼັງຈາກປ່ຽນແປງຂໍ້ມູນແລ້ວ ກົດແກ້ໄຂ






## 1.5 ການລຶບຊື່ຜູ້ໃຊ້

ໃນກໍລະນີຊື່ຜູ້ໃຊ້ບໍ່ໄດ້ຖືກໃຊ້ງານ ຫຼື ບໍ່ມີການເຄື່ອນໄຫວ ແລະ ຕ້ອງການລຶບອອກ ມີຂັ້ນຕອນດັ່ງນີ້:

1) ເລືອກຊື່ຜູ້ໃຊ້ທີ່ຕ້ອງການລຶບ ກົດລຶບ




 ແມ່ນປຸ່ມປິດບໍ່ໃຫ້ໃຊ້ງານ

 ແມ່ນປຸ່ມແກ້ໄຂ

 ແມ່ນປຸ່ມລຶບ

### ບົດທີ 4: ການບໍລິຫານຈັດການໜ້າເວັບໄຊ

ການຕົກແຕ່ງໜ້າເວັບເປັນສິ່ງສຳຄັນອີກຢ່າງໜຶ່ງ ເພື່ອສ້າງຄວາມປະທັບໃຈໃຫ້ກັບຜູ້ທີ່ເຂົ້າຊົມເວັບຂອງເຮົາ ເຊິ່ງ G-web Platform ກໍ່ມີເຄື່ອງມື ແລະ Function ໃນການຈັດການຕົກແຕ່ງໃຫ້ເວັບມີຄວາມສວຍງາມ ບໍ່ວ່າຈະເປັນແບນເນີ, ເມນູ, ສີຕົວໜັງສື, ສີພື້ນຫຼັງ, Slide ຂ່າວ.

## 1. ການບໍລິຫານຈັດການແບນເນີ (Banner)

1) ເຂົ້າໄປທີ່ ຕັ້ງຄ່າ ກົດບໍລິຫານ Banner

2) ການຕັ້ງຄ່າແບບເນີ: ເປັນການກຳນົດແບນເນີທີ່ຕ້ອງການໃສ່ (ຂະໜາດມາດຕະຖານແມ່ນ 1350Px x 200Px)

3) ການຕັ້ງຄ່າເມນູ: ເປັນການກຳນົດສີ ແລະ ຂໍ້ຄວາມຂອງເມນູ

4) ການຕັ້ງຄ່າສ່ວນຫົວຂໍ້ ແລະ Footer: ເປັນການນົດສີ ແລະ ຂໍ້ຄວາມເທິງໜ້າເວັບ, ການເພີ່ມ Icon, ການກຳນົດຂໍ້ຄວາມໃນສ່ວນ Footer.

5) ການຕັ້ງຄ່າເລື່ອນພາບ slide: ເປັນການກຳນົດຈຳນວນ ແລະ ເວລາຂອງ Slide

6) ການຕັ້ງຄ່າແຜນຜັງເວັບໄຊ: ເປັນການກຳນົດແຜນຜັງເວັບໄຊ ເພື່ອຊ່ວຍໃຫ້ຜູ້ທີ່ເຂົ້າເວັບຮູ້ວ່າໃນເວັບມີໜ້າໃດແດ່ ແລະ ສາມາດເຂົ້າເຖິງໜ້າຕ່າງໆໄດ້ ຜ່ານທາງລິ້ງຢ່າງສະດວກວ່ອງໄວ.



2. ການບໍລິຫານເມນູ

Menu ຄືສິ່ງທີ່ຈຳເປັນສຳລັບເວັບໄຊ ເຊິ່ງຈະແຍກອອກເປັນໝວດເມນູຫຼັກ ແລະ ເມນູຍ່ອຍ ແຕ່ລະເນື້ອຫາເພື່ອເຮັດໃຫ້ເຂົ້າໃຈງ່າຍ.

2.1 ການເພີ່ມເມນູໃໝ່

1) ກົດເຂົ້າ ຕັ້ງຄ່າ
2) ກົດ ບໍລິຫານເມນູ
3) ກົດ ສ້າງເມນູ
4) ໃສ່ຊື່ເມນູເປັນພາສາລາວ
5) ໃສ່ຊື່ເມນູເປັນພາສາອັງກິດ
6) ໃສ່ລິ້ງ (Link) ໃຫ້ເມນູ ເພື່ອເຊື່ອມໂຍງໄປໜ້າເວັບທີ່ຕ້ອງການ ຫຼື ເຊື່ອມໂຍງໄປເວັບໄຊອື່ນໆ. ການໃສ່ລິ້ງເມນູຈະມີ 3 ຮູບແບບໃຫ້ເລືອກ ດັ່ງນີ້:
   - Link to content page:index.php?r=site/detail&id=? (detail id) ເປັນການລິ້ງໄປຫາໜ້າເວັບ ຫຼື ບົດຄວາມນັ້ນໂດຍກົງ.
   - Link to content type page:ndex.php?r=site/contents&id=? (Content id) ເປັນການລິ້ງໄປຫາກຸ່ມເນື້ອຫາ (Category) ເຊິ່ງຈະສະແດງໃນລັກສະນະເປັນກຸ່ມບົດຄວາມ ຫຼື ກຸ່ມຫົວຂໍ້.
   - ລິ້ງ: ເປັນການໃສ່ລິ້ງເພື່ອເຊື່ອມໂຍງໄປໜ້າເວັບໄຊອື່ນ.
7) ຕິກ ✓ ເປີດໃຊ້ງານ
8) ໃສ່ຕົວເລກເພື່ອກຳນົດລຳດັບການສະແດງ ເຊັ່ນ: 1, 2 ( 1 ໝາຍເຖິງສະແດງທຳອິດ, 2 ໝາຍເຖິງສະແດງລຳດັບທີ 2)
9) ກົດ ເພີ່ມ






2.2 ການເພີ່ມເມນູຍ່ອຍ (Sub Menu)

ເມນູຍ່ອຍແມ່ນເມນູທີ່ເຮັດໜ້າທີ່ເປັນ Shortcut ຫຼື ເມນູລັດ ເພື່ອລິ້ງໄປຫາເນື້ອໃນຕ່າງໆພາຍໃນຕົວເວັບໄຊ ຫຼື ເວັບໄຊອື່ນໆຕາມຕ້ອງການ

1) ກົດ ຕັ້ງຄ່າ
2) ບໍລິຫານເມນູ
3) ເລືອກເມນູຫຼັກ ທີ່ຕ້ອງການເພີ່ມເມນູຍ່ອຍເຂົ້າໄປ. ກົດເຄື່ອງໝາຍ +
4) ເພີ່ມເມນູຕາມຂັ້ນຕອນຂ້າງເທິງ (ຂໍ້ 4.1)



## ບົດທີ 5: ການບໍລິຫານຈັດການເນື້ອໃນໜ້າຫຼັກ (Home Page Management)

1. ການສ້າງຫົວຂໍ້ໝວດໝູ່ໜ້າຫຼັກ (Home Page Category)

   ຫົວຂໍ້ໝວດໝູ່ໜ້າຫຼັກ (Home Page Category) ແມ່ນກຸ່ມຫົວຂໍ້ທີ່ຕ້ອງການສະແດງຢູ່ເທິງໜ້າຫຼັກ (Home Page) ເຊິ່ງມີວິທີການສ້າງດັ່ງນີ້:



ຮູບຕົວຢ່າງ ບັນດາໝວດໝູ່ບົດຄວາມທີ່ສະແດງເທິງໜ້າຫຼັກ (Home Page)

1) ກົດ ບໍລິຫານໜ້າຫຼັກ
2) ກົດ ບໍລິຫານປະເພດໜ້າຫຼັກ
3) ກົດ ສ້າງປະເພດໜ້າຫຼັກ




4) ໃສ່ຊື່ພາສາລາວ
5) ໃສ່ຊື່ພາສາອັງກິດ

6) ເລືອກ ເປີດໃຊ້ງານ

7) ກໍານົດລໍາດັບສະແດງຜົນ

8) ກົດ ເພີ່ມ




2. ການເພີ່ມໜ້າຫຼັກ

1) ກົດ ບໍລິຫານໜ້າຫຼັກ

2) ກົດ ບໍລິຫານໜ້າຫຼັກ

3) ກົດ ເພີ່ມໜ້າຫຼັກ




4) ໃສ່ຊື່ພາສາລາວ

5) ໃສ່ຊື່ພາສາອັງກິດ

6) ໃສ່ລີ້ງທີ່ຕ້ອງການເຊື່ອມໂຍງ

7) ເລືອກປະເພດໜ້າຫຼັກທີ່ຕ້ອງການສະແດງ

8) ເລືອກຮູບພາບ

9) ກົດ ບັນທຶກ




## 2.2 ບໍລິຫານ ໜ້າຫຼັກເບື້ອງຂວາ

ແມ່ນການຈັດການ ເມນູ ຫຼື ບ໋ອກເພື່ອເຊື່ອມໂຍງເວັບອື່ນໆທາງເບື້ອງຂວາຂອງໜ້າເວັບໄຊ ດັ່ງຮູບ:



➢ ການເພີ່ມໜ້າຫຼັກເບື້ອງຂວາ

1) ກົດ ບໍລິຫານໜ້າຫຼັກ
2) ກົດ ບໍລິຫານໜ້າຫຼັກເບື້ອງຂວາ
3) ກົດ ເພີ່ມບັອກ




4) ໃສ່ຮູບທີ່ຕ້ອງການ (ຂະໜາດມາດຕະຖານຂອງຮູບ 500 x 225 px)
5) ໃສ່ຫົວຂໍ້ພາສາລາວ
6) ໃສ່ຫົວຂໍ້ພາສາອັງກິດ
7) ໃສ່ລິ້ງທີ່ຕ້ອງການເຊື່ອມໂຍງ
8) ກົດ ໃຊ້ງານ
9) ກົດ ເພີ່ມ




## ບົດທີ 6: ການບໍລິຫານຈັດການເນື້ອຫາ

ການຈັດການເນື້ອຫາເປັນການຈັດການເນື້ອຫາເປັນການສ້າງໝວດໝູ່ບົດຄວາມ (Category), ສ້າງບົດຄວາມ ແລະ ແກ້ໄຂບົດຄວາມຕ່າງໆ

1. ການບໍລິຫານປະເພດເນື້ອຫາ

ການບໍລິຫານປະເພດເນື້ອຫາ ເປັນການສ້າງໝວດໝູ່ຂອງບົດຄວາມ (Category) ຫຼື ເວົ້າຢ່າງໜຶ່ງວ່າເປັນການສ້າງແຟ້ມບົດຄວາມ ເພື່ອບັນຈຸບົດຄວາມຕ່າງໆ.

1.1 ການສ້າງປະເພດເນື້ອຫາ

1) ກົດ ບໍລິຫານເນື້ອຫາ
2) ກົດ ບໍລິຫານປະເພດເນື້ອຫາ
3) ກົດ ສ້າງປະເພດຫົວຂໍ້
4) ໃສ່ຫົວຂໍ້ພາສາລາວ
5) ໃສ່ຫົວຂໍ້ພາສາອັງກິດ
6) ເລືອກປະເພດ ວ່າຕ້ອງການໃຫ້ບົດຄວາມປະກອບມີຫຍັງແດ່ ແລະ ສາມາດເຮັດຫຍັງໄດ້ແດ່
   - ມີບົດຄວາມຫຍໍ້
   - ມີລາຍລະອຽດຂອງບົດຄວາມ
   - ມີຮູບພາບ
   - ມີຄຳສັບໃຫ້ Google ຄົ້ນຫາ
   - ມີຄຳຫຼັກ (Meta) ຊ່ວຍຈັດອັນດັບໃນການຄົ້ນຫາ ໃຫ້ສາມາດຄົ້ນຫາໄດ້ງ່າຍ
   - ມີວັນເລີ່ມສ້າງ: ເປັນການກຳນົດວັນທີ່ເລີ່ມສ້າງບົດຄວາມ

- ມີວັນສິ້ນສຸດ: ເປັນການກຳນົດວັນທີ່ສິ້ນສຸດບົດຄວາມທີ່ເຮົາສ້າງ, ຫຼັງຈາກກາຍກຳນົດແລ້ວ ບົດຄວາມດັ່ງກ່າວຈະບໍ່ສະແດງເທິງໜ້າເວັບແບບອັດຕະໂນມັດ
- ມີຫຼາຍເອກະສານຄັດຕິດ: ເປັນການກຳນົດໃຫ້ບົດຄວາມນັ້ນສາມາດອັບໂຫລດເອກະສານໄດ້
- ມີປະເພດກົດໝາຍ

7) ກົດ ເປີດໃຊ້ງານ

8) ກົດເພີ່ມ




2. ການເພີ່ມບົດຄວາມ ຫຼື ຂ່າວ

ການສ້າງບົດຄວາມ ຈະມີ 2 ຮູບແບບຄື: ຮູບແບບທີ່ 1 ເປັນການສ້າງບົດຄວາມທີ່ຂຶ້ນກັບໝວດໝູ່ ຫຼື ຫົວຂໍ້ຂ່າວໃດໜຶ່ງ ແລະ ຮູບແບບທີ 2 ເປັນການສ້າງບົດຄວາມທີ່ບໍ່ຂຶ້ນກັບໝວດໝູ່ຂ່າວໃດ (ບົດຄວາມດ່ຽວ)

1.1 ການສ້າງບົດຄວາມທີ່ຂຶ້ນກັບໝວດໝູ່ ຫຼື ຫົວຂໍ້

1) ກົດບໍລິຫານເນື້ອຫາ

2) ເລືອກໝວດໝູ່ບົດຄວາມທີ່ຕ້ອງການ

3) ກົດ ເພີ່ມ

4) ໃສ່ຫົວຂໍ້ບົດຄວາມເປັນພາສາລາວ

5) ໃສ່ຮູບ

6) ເພີ່ມເນື້ອໃນບົດຄວາມ







7) ໃສ່ຫົວຂໍ້ບົດຄວາມພາສາອັງກິດ

8) ໃສ່ເນື້ອໃນບົດຄວາມພາສາອັງກິດ

9) ເລືອກວັນທີ

10)ກົດ ໃຊ້ງານ

11)ກົດ ເພີ່ມ




## 2.2 ການສ້າງບົດຄວາມທີ່ບໍ່ຂຶ້ນກັບໝວດໝູ່ຂ່າວ (Static content)

1) ກົດບໍລິຫານເນື້ອຫາ
2) ກົດ ບໍລິຫານ Static Content
3) ກົດ ເພີ່ມ Static Content
4) ສ້າງບົດຄວາມຕາມຂັ້ນຕອນຂ້າງເທິງ (ຂໍ້ 2.1)




## 2.3 ການເພີ່ມຮູບພາບໃນບົດຄວາມ






1) ກົດ ຮູບພາບ
2) ກົດ Browse server
3) ກົດ ສ້າງໂຟລ໌ເດີໃໝ່
4) ກົດ ອັບໂຫລດຮູບພາບ
5) ເລືອກຮູບພາບທີ່ຕ້ອງການ
6) ກົດ OK

2.4 ການໃສ່ລິ້ງ Link ໃຫ້ຕົວໜັງສື ແລະ ຮູບພາບໃນບົດຄວາມ




1) ທາສີໃສ່ຕົວໜັງສື ຫຼື ຮູບພາບ
2) ກົດ Link
3) ໃສ່ລິ້ງ Link ທີ່ຕ້ອງການ
4) ກົດ OK

## 2.5 ການໃສ່ລິ້ງເມນູ

ການໃສ່ລິ້ງເມນູເພື່ອເຊື່ອມໂຍງໄປຫາບົດຄວາມ ວິທີການໃສ່ແມ່ນເລືອກຮູບແບບຂອງລິ້ງ ແລ້ວໃຫ້ລຶບເຄື່ອງໝາຍຖາມ ? ສີແດງອອກ ຫຼັງຈາກນັ້ນໃສ່ ID ຂອງໜ້າເວັບ ຫຼື ບົດຄວາມໃສ່.

ໃນນີ້ຈະສ້າງເມນູ ເພື່ອໃຫ້ເຊື່ອມໂຍງໄປຫາບົດຄວາມ ເຮົາຕ້ອງຮູ້ກ່ອນວ່າ ID ຂອງບົດຄວາມດັ່ງກ່າວແມ່ນຫຍັງ? ແລ້ວຈຶ່ງແກ້ໄຂ ຫຼື ສ້າງເມນູຂຶ້ນມາໃໝ່. ລະຫັດ ID ຈະມີ 2 ຮູບແບບຄື: contents id ແລະ detail id.







ຕົວຢ່າງ: ການເຂົ້າເບິ່ງ ID ຂອງບົດຄວາມ ມີວິທີການດັ່ງນີ້:

1) ກົດ ບໍລິການເນື້ອຫາ
2) ເລືອກເນື້ອຫາທີ່ຕ້ອງການ (ຕົວຢ່າງ: ບໍລິຫານ ເຕັກໂນໂລຊີພາສາລາວ)
3) ຈະສັງເກດເຫັນ ID ຢູ່ຫ້ອງລະຫັດ (550)
4) ຫົວຂໍ້ຂອງບົດຄວາມ




- ເລີ່ມຕົ້ນສ້າງເມນູ
    5) ກົດ ຕັ້ງຄ່າ
    6) ເລືອກບໍລິຫານ ເມນູ
    7) ກົດ ສ້າງເມນູ
    8) ໃສ່ຊື່ເມນູພາສາລາວ
    9) ໃສ່ຊື່ເມນູພາສາອັງກິດ
    10)ເລືອກຮູບແບບການລິ້ງທີ່ຕ້ອງການ, ລົບເຄື່ອງໝາຍຖາມ ? ສີແດງອອກ ແລະ ໃສ່ ID ຂອງບົດຄວາມນັ້ນ
    11)ຕິກ ✓ ເປີດໃຊ້ງານ
    12)ໃສ່ຕົວເລກເພື່ອກຳນົດລຳດັບການສະແດງ
    13)ກົດ ເພີ່ມ









ການສະແດງຜົນຮູບແບບ detail id




ການສະແດງຜົນຮູບແບບ Contents id

2.6 ການນຳເຂົ້າວິດີໂອໃສ່ໜ້າເວັບ.

ການນຳເຂົ້າວິດີໂອຈາກ Facebook, Youtube ມາໃສ່ໃນໜ້າເວັບໄຊ ເປັນການຝັງ (Embed) Code ຂອງວິດີໂອນັ້ນມາໃສ່ໃນໜ້າເວັບ.

1) ກົດເຂົ້າເບິ່ງວິດີໂອທີ່ຕ້ອງການຝັງ (Embed)
2) ກົດປຸ່ມສາມຈໍ້າ (…)
3) ກົດປຸ່ມຝັງ (Embed)
4) ກົດ Copy Code




5) ເຂົ້າໄປບົດຄວາມທີ່ຕ້ອງການເອົາວິດີໂອໃສ່
6) ເຂົ້າໄປລາຍລະອຽດ ກົດປຸ່ມ Source ແລ້ວວາງ Code ທີ່ Copy ໃສ່




2.7 ການໃສ່ແຜນທີ່ (Google Map)

1) ເຂົ້າ google map ໃນ web browser ພິມ https://www.google.com/maps/

2) ຄົ້ນຫາ ແລະ ເລືອກສະຖານທີ່ ແລ້ວກົດ share

3) ກົດ Embed a map

4) Copy Code

5) ເຂົ້າໄປບົດຄວາມທີ່ຕ້ອງການໃສ່ແຜນທີ່

6) ເຂົ້າໄປລາຍລະອຽດ ກົດປຸ່ມ Source ແລ້ວວາງ Code ທີ່ Copy ໃສ່




## ບົດທີ 7: ການບໍລິຫານຈັດການບັນຫາຄຳຕິຊົມ

ການຈັດການບັນຫາຄຳຕິຊົມ ເພື່ອໃຫ້ຜູ້ເຂົ້າເວັບໄຊໄດ້ແຈ້ງປັນຫາ ຫຼື ຄຳເຫັນຕ່າງໆໃນເວັບໄຊຂອງເຮົາ

1. ປະເພດບັນຫາ

   ປະເພດບັນຫາແມ່ນການສ້າງຫົວຂໍ້ບັນຫາຕ່າງໆເພື່ອໃຫ້ຜູ້ເຂົ້າເວັບໄດ້ເລືອກວ່າຈະແຈ້ງບັນຫາ ຫຼື ຄຳເຫັນໃດ

   1.1 ການສ້າງຫົວຂໍ້ປະເພດບັນຫາ

   1) ກົດ ບໍລິຫານບັນຫາ

   2) ກົດ ປະເພດບັນຫາ

   3) ກົດ ສ້າງປະເພດເນື້ອໃດ

   4) ໃສ່ ຫົວຂໍ້ເປັນພາສາລາວ ແລະ ພາສາອັງກິດ

   5) ກົດ ສະຖານະພາບ

   6) ກົດເພີ່ມ







1.2 ການເພີ່ມເມນູ ແຈ້ງບັນຫາ

1) ເຂົ້າໄປສ້າງເມນູ

2) ໃສ່ລີ້ງ index.php?r=site/issue



1.3 ການອ່ານປະເພດບັນຫາ

1) ກົດ ບໍລິຫານບັນຫາ

2) ກົດ ອ່ານບັນຫາ

3) ກົດ ຮູບຕາ ເພື່ອອ່ານລາຍລະອຽດຂອງບັນຫາທີ່ໄດ້ຮັບແຈ້ງ

4) ການນຳອອກເປັນ Excel (Export to Excel)




## ບົດທີ 8: ການຈັດການລະບົບລົງທະບຽນກອງປະຊຸມ

ການຈັດການລະບບົບລົງທະບຽນກອງປະຊຸມເປັນການສ້າງຫ້ອງປະຊຸມເພື່ອໃຫ້ຜູ້ຈະເຂົ້າຮ່ວມກອງປະຊຸມສາມາດລົງທະບຽນອອນລາຍໄດ້, ເຊິ່ງການສ້າງຫ້ອງປະຊຸມສາມາດກຳນົດພາກສ່ວນ ແລະ ຈຳນວນຄົນທີ່ລົງທະບຽນໄດ້. ການຈັດການລະບົບລົງທະບຽນກອງປະຊຸມແມ່ນສາມາດຈັດການໄດ້ແຕ່ສິດຂອງ adminregister.

1. ການສ້າງລະບົບລົງທະບຽນກອງປະຊຸມ

   1) ເຂົ້າລະບົບ user ໃນສິດຂອງ adminregister

   2) ກົດ ຈັດການ ການລົງທະບຽນ

   3) ກົດ ສ້າງຫ້ອງປະຊຸມ

   4) ໃສ່ລາຍລະອຽດຕ່າງໆ

   5) ກົດເພີ່ມ






2. ການເຊີນພາກສ່ວນຕ່າງໆລົງທະບຽນກອງປະຊຸມ

1) ກົດປຸ່ມ ຮູບຕາ  ເພື່ອເຊີນຜູ້ເຂົ້າຮ່ວມ
2) ກົດ ເຊີນອົງກອນເຂົ້າຮ່ວມ
3) ໃສ່ຊື່ອົງການ ຫຼື ພາກສ່ວນທີ່ຕ້ອງການເຊີນ
4) ໃສ່ຈຳນວນຜູ້ເຂົ້າຮ່ວມ
5) ກົດ ບັນທຶກ
6) ກົດ ຮູບເຄື່ອງພິມ  ເພື່ອພິມ QR Code ແລະ ລະຫັດຂອງກອງປະຊຸມອອກມາ


157.119.182.182/phl/gweb/gweb/backend/web/index.php?r=event%2Fevent%2Findex
test meeting
1
157.119.182.182/phl/gweb/gweb/backend/web/index.php?r=event%2Fevent%2Fview&id=18
2
3
4
5
https://localhost/dgc/gweb/gweb/backend/web/index.php?r=event%2Fevent%2Fview&id=18
ຝຶກອົບຮົມການນຳໃຊ້ G-web platform ໃຫ້ກົມຄົ້ນຄ້ວາສັງລວມ, ຫ້ອງວ່າການສຳນັກງານປະທານປະເທດ
ລະຫັດ QR
ລະຫັດ
ຈຳນວນຄົນ
1654224000220603
20
6
ຫົວຂໍ້ງານ (Event)

3. ການລົງທະບຽນກອງປະຊຸມອອນລາຍ

ການລົງທະບຽນກອງປະຊຸມອອນລາຍ ແມ່ນສາມາດເວົ້າຜ່ານເວັບໄຊທີ່ກ່ຽວຂ້ອງ ຫຼື ສາມາດລົງທະບຽນຜ່ານ QR Code ທີ່ພາກສ່ວນກ່ຽວຂ້ອງຄັດຕິດໃຫ້

1.1 ຂັ້ນຕອນການລົງທະບຽນກອງປະຊຸມອອນລາຍ

1) ເຂົ້າເວັບໄຊພາກສ່ວນທີ່ກ່ຽວຂ້ອງ ແລະ ເລືອກຫົວຂໍ້ກອງປະຊຸມທີ່ຕ້ອງການລົງທະບຽນ
2) ກົດເຂົ້າລົງທະບຽນ
3) ປ້ອນລະຫັດເພື່ອຢືນຢັນກອງປະຊຸມ (ລະຫັດຈະໄດ້ຈາກພາກສ່ວນທີ່ຈັດກອງປະຊຸມຄັດຕິດໃຫ້)
4) ປ້ອນຂໍ້ມູນລາຍລະອຽດຂອງຜູ້ເຂົ້າຮ່ວມລົງທະບຽນ
5) ກົດສົ່ງ







ແບບຟອມການລົງທະບຽນ
ທ່ານປ້ອນລາຍລະອຽດເຂົ້າໃນຟອມລົງທະບຽນ
ອະນຸມັດລົງທະບຽນສູງສຸດ 20 ຄົນ
ລົງທະບຽນແລ້ວ 0 ຄົນ
ນາມ
=== ເລືອກ ນາມ===
ຊື່
ນາມສະກຸນ
ເພດ
ຊາຍ
ຍິງ
ຕຳແໜ່ງ
ເບີໂທ
ອີເມວ
4
5
ສົ່ງ